# 2026 ສັງລວມຂໍ້ມູນອົງການ ສປປ ລາວ

Norwegian People's Aid



"ຕະຫຼອດ 20 ກວ່າປີທີ່ຜ່ານມາ, ພວກເຮົາມັກພົບເຫັນລະເບີດຢູ່ໄຮ່ນາຂອງພວກເຮົາ" ກ່າວໂດຍ ນາງ ບຸນມີ ຈາກບ້ານຈະລີງ, ເມືອງດາກຈຶງ, ແຂວງເຊກອງ. "ການທີ່ອົງການເອັນພີເອເຂົ້າມາກວດກູ້ລະເບີດເຫຼົ່ານີ້ ເຮັດໃຫ້ຄອບຄົວຂອງເຮົາມີຄວາມໂລ່ງສະບາຍໃຈຂຶ້ນ."
- 16 ສິງຫາ 2026

## ສະພາບການ

ສປປ ລາວ ຖືໄດ້ວ່າເປັນປະເທດທີ່ຖືກຖິ້ມລະເບີດຢ່າງໜັກໜ່ວງທີ່ສຸດຕໍ່ຫົວຄົນ ໃນປະຫວັດສາດ ແລະ ຍັງຄົງເປັນໜຶ່ງໃນຫ້າປະເທດທີ່ມີການປົນເປື້ອນຂອງລະເບີດລູກຫວ່ານ (CMR) ຫຼາຍທີ່ສຸດໃນໂລກ. ໃນໄລຍະປີ 1964 - 1973, ລະເບີດ ແລະ ຍຸດໂທປະກອນຫຼາຍກວ່າ 2 ລ້ານໂຕນໄດ້ຖືກຖິ້ມລົງໃນແຜ່ນດິນລາວ ເຊິ່ງເປັນຜົນມາຈາກພາລະກິດການຖິ້ມລະເບີດຫຼາຍກວ່າ 580,000 ພາລະກິດ – ເຊິ່ງທຽບເທົ່າກັບວ່າຈະມີຍົນ 1 ລຳ ທີ່ບັນທຸກລະເບີດມາຖິ້ມໃສ່ລາວທຸກໆ 8 ນາທີ ຕະຫຼອດ 24 ຊົ່ວໂມງ, ເປັນເວລານານເຖິງ 9 ປີ.

ໃນຂະນະທີ່ຕົວເລກການຄາດຄະເນທີ່ເຊື່ອຖືໄດ້ກ່ຽວກັບຈຳນວນການຕົກຄ້າງຂອງລະເບີດລູກຫວ່ານ (ບົມບີ) ແລະ ລະເບີດປະເພດອື່ນໆ ໃນ ສປປ ລາວ ຍັງບໍ່ທັນມີຕົວເລກລະບຸແບບແນ່ນອນ, ແຕ່ລະດັບການຕົກຄ້າງຖືໄດ້ວ່າ "ຫຼວງຫຼາຍ". ການຕົກຄ້າງຂອງລະເບີດລູກຫວ່ານ ຖືໄດ້ວ່າສູງທີ່ສຸດໃນໂລກເມື່ອວັດແທກຕໍ່ກັບຫົວປະຊາກອນ, ເຊິ່ງສ້າງຄວາມສ່ຽງຕໍ່ຊີວິດການເປັນຢູ່, ການພັດທະນາເສດຖະກິດ-ສັງຄົມ ແລະ ຄຸນນະພາບຊີວິດຂອງປະຊາຊົນ ໃນຊຸມຊົນທີ່ໄດ້ຮັບຜົນກະທົບຈາກການຕົກຄ້າງຂອງ ລບຕ.

ອີງຕາມ ແຜນຍຸດທະສາດແຫ່ງຊາດໃນປັດຈຸບັນ ກ່ຽວການເຄື່ອນໄຫວວຽກງານການແກ້ໄຂບັນຫາລະເບີດບໍ່ທັນແຕກ "ເສັ້ນທາງກ້າວສູ່ຄວາມປອດໄພ III" (2021-2030), ມີການຢືນຢັນແລ້ວວ່າຈຳນວນຜູ້ບາດເຈັບຈາກລະເບີດບໍ່ທັນແຕກແມ່ນມີຢ່າງໜ້ອຍ 50,000 ຄົນ ນັບຕັ້ງແຕ່ສົງຄວາມອິນດູຈີນ ຊ່ວງປີ 1964 ຈົນເຖິງ 1973. ເຊິ່ງໃນຕົວເລກນັ້ນ, ມີປະມານ 30,000 ຄົນທີ່ເສຍຊີວິດແລ້ວ.

ສປປ ລາວ ແມ່ນພາຄີ ຫຼື ຜູ້ລົງນາມໃນສົນທິສັນຍາວ່າດ້ວຍ ການເກືອດຫ້າມລະເບີດລູກຫວ່ານ ຫຼື ບົມບີ (CCM), ເຊິ່ງບໍ່ແມ່ນພຽງແຕ່ເປັນໜຶ່ງໃນບັນດາປະເທດທຳອິດທີ່ລົງນາມໃນສັນຍານີ້, ແຕ່ຍັງຖືວ່າເປັນປະເທດທີ່ໄດ້ຮັບໄຊອີກດ້ວຍ. ອີງຕາມມາດຕາທີ່ 4 ຂອງສົນທິສັນຍາ CCM, ປະເທດລາວຈຳຕ້ອງໄດ້ບັນລຸທຸກພາລະກິດ ແລະ ວຽກງານຕາມແຜນທີ່ວາງໄວ້ພາຍໃນປີ 2030, ເຊິ່ງຕ້ອງໄດ້ກວດກູ້ທຸກໆພື້ນທີ່ທີ່ມີການຕົກຄ້າງຂອງລະເບີດລູກຫວ່ານ (ບົມບີ) ໃຫ້ໝົດ.

ອີງຕາມຕາມຂໍ້ມູນຈາກ Mine Action Review, ໃນປີ 2025 ສປປ ລາວ ໄດ້ກວດກູ້ພື້ນທີ່ ທີ່ມີການປົນເປື້ອນ 67 ກມ² ແລະ ທຳລາຍລະເບີດ 55,808 ໜ່ວຍ ເຊິ່ງສະແດງໃຫ້ເຫັນການກວດກູ້ ແລະ ການທຳລາຍປະຈຳປີທີ່ຫຼາຍທີ່ສຸດ ທີ່ເຄີຍບັນທຶກໄວ້ໂດຍລັດພາຄີຂອງສົນທິສັນຍາວາດ້ວຍ ການເກືອດຫ້າມລະເບີດລູກຫວ່ານ.

## ກ່ຽວກັບໂຄງການ

ໂຄງການຂອງເອັນພີເອໃນ ສປປ ລາວ ແມ່ນ ໜຶ່ງໃນໂຄງການທີ່ໃຫຍ່ທີ່ສຸດໃນໜ້າວຽກການເກັບກູ້ລະເບີດ ແລະ ຊ່ວຍເຫຼືອດ້ານມະນຸດສະທຳ, ເຊິ່ງມີລາຍຈ່າຍ $13,716,113 ໃນປີ 2025 ແລະມີການຈ້າງງານພະນັກງານທ້ອງຖິ່ນ 1,000 ກວ່າຄົນ ຊ່ວງເດືອນສິງຫາ 2026.

ອົງການເອັນພີເອ ໄດ້ເລີ່ມປະຕິບັດວຽກງານຢູ່ ສປປ ລາວ ນັບຕັ້ງແຕ່ປີ 1997 ເປັນຕົ້ນມາ. ໃນຊ່ວງ 10 ປີທຳອິດຂອງການປະຕິບັດງານ, ເອັນພີເອໃຫ້ການຊ່ວຍເຫຼືອ ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ), ດ້ານວິຊາການ ແລະ ການຮັບປະກັນຄຸນນະພາບ, ກ່ອນທີ່ຈະເລີ່ມປະຕິບັດວຽກງານຂອງຕົນເອງໃນປີ 2009 ເປັນຄັ້ງທຳອິດຢູ່ທີ່ແຂວງສາລະວັນ.

ໃນເດືອນສິງຫາ 2023, ເອັນພີເອ ໄດ້ເລີ່ມກິດຈະກຳໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ (EORE) ເປັນຄັ້ງທຳອິດ, ເຊິ່ງເຮັດວຽກຢ່າງໃກ້ຊິດກັບຊຸມຊົນທ້ອງຖິ່ນໂດຍສະເພາະໃຫ້ແກ່ບັນດາເດັກນ້ອຍ ເພື່ອໃຫ້ຄວາມຮູ້ກ່ຽວກັບການປົນເປື້ອນຂອງລະເບີດ, ໄພຄວາມສ່ຽງທີ່ກ່ຽວຂ້ອງ, ເສີມສ້າງພຶດຕິກຳເພື່ອຄວາມປອດໄພ ແລະ ໃຫ້ຮັບຮູ້ເຖິງຂະບວນການແຈ້ງ ຫຼື ລາຍງານກ່ຽວກັບລະເບີດທີ່ພົບເຫັນ.

ຮອດທ້າຍປີ 2023, ເອັນພີເອ ໄດ້ເພີ່ມຂີດຄວາມສາມາດໃນການດຳເນີນງານຂອງຕົນເປັນສອງເທົ່າ ເຊິ່ງໄດ້ຮັບການສະໜັບສະໜູນ ຈາກການເພີ່ມທຶນຂອງລັດຖະບານສະຫະລັດອາເມລິກາ ແລະ ການປະກອບສ່ວນຢ່າງຕໍ່ເນື່ອງຈາກ ລັດຖະບານນອກແວ.

ໃນວັນທີ 31 ສິງຫາ 2026, ເອັນພີເອ ແມ່ນໜຶ່ງໃນອົງການປະຕິບັດງານດ້ານການເກັບກູ້ລະເບີດທີ່ໃຫຍ່ທີ່ສຸດໃນ ສປປ ລາວ ເຊິ່ງລວມມີ 8 ທີມສຳຫຼວດ, 40 ທີມກວດກູ້ ແລະ 4 ທີມວຽກງານ EORE ແລະ 1 ທີມຖາງປ່າ ທີ່ພວມປະຕິບັດງານໃນ 4 ແຂວງຄື: ຈຳປາສັກ, ເຊກອງ, ອັດຕະປື, ແລະ ສາລະວັນ.

ນອກຈາກນີ້, ເອັນພີເອ ຍັງເຮັດວຽກຮ່ວມກັບ ຄະນະກຳມະການຄຸ້ມຄອງແຫ່ງຊາດ (ຄຊກລ) ໃນດ້ານວຽກງານ ໂຄງການ ການພັດທະນາຄວາມສາມາດໃນການຄຸ້ມຄອງຂໍ້ມູນຂ່າວສານ (IM) ໂດຍການຝຶກອົບຮົມບັນດາພະນັກງານ, ການພັດທະນາເອກະສານສຳຄັນຕ່າງໆ, ປັບປຸງລະບົບ IM, ແລະ ເສີມຕື່ມແກ້ໄຂຄຸນນະພາບຂອງຂໍ້ມູນ ລບຕ ໃນອະດີດຜ່ານມາ ໃນ ສປປ ລາວ.

ພ້ອມນັ້ນ, ຍັງໄດ້ຮັບທຶນຈາກລັດຖະບານການາດາ, ເອັນພີເອໃຫ້ການສະໜັບສະໜູນບາງສ່ວນ ທີ່ ສປປ ລາວ ເປັນປະທານໃນການວາງແຜນ ແລະ ຈັດກອງປະຊຸມທົບທວນສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານຮອບວຽນທີ 3, ເຊິ່ງຈະຈະຈັດຂຶ້ນທີ່ນະຄອນຫຼວງວຽງຈັນໃນເດືອນກັນຍາ 2026 ລວມເຖິງການຈ້າງທີ່ປຶກສາເພື່ອຊ່ວຍໃນການວາງແຜນ ແລະ ກະກຽມຕ່າງໆດ້ວຍ.

ອີງຕາມການປະກາດໃຊ້ເງື່ອນໄຂໃໝ່ຂອງທຶນຊ່ວຍເຫຼືອຂອງລັດຖະບານສະຫະລັດອາເມລິກາໃນຕົ້ນປີ 2026, ອົງການເອັນພີເອບໍ່ສາມາດເຮັດສັນຍາໃໝ່ໃດໆຮ່ວມກັບລັດຖະບານສະຫະລັດອາເມລິກາໄດ້. ດ້ວຍເຫດຜົນນີ້, ນັບຕັ້ງແຕ່ 1 ພະຈິກ 2026 ອົງການເອັນພີເອຈະຫຼຸດຂອບເຂດການປະຕິບັດງານລົງຢູ່ໃນ ສປປ ລາວ ໂດຍຈະຫຼຸດຈຳນວນພະນັກງານຄົນລາວ ແລະ ຕ່າງປະເທດ 1,000 ກວ່າຄົນ ໃຫ້ເຫຼືອພຽງ 30 ຄົນ ເຊິ່ງລວມທັງທີມສາມາດເຮັດຫຼາຍກວ່າໜຶ່ງໜ້າວຽກ 2 ທີມ.

ອົງການເອັນພີເອ ຍັງຄົງມຸ່ງໝັ້ນທີ່ຈະສະໜັບສະໜູນບຸລິມະສິດທີ່ສຳຄັນແຫ່ງຊາດໃນວຽກງານລະເບີດທີ່ບໍ່ທັນແຕກ (ລບຕ). ໂດຍຄາດຫວັງວ່າຈະໄດ້ຮັບທຶນສະໜັບສະໜູນຈາກລັດຖະບານນອກແວ ໃນປີ 2027, ອົງການເອັນພີເອມີເປົ້າໝາຍເພື່ອຮັກສາຂີດຄວາມສາມາດໃນການປະຕິບັດງານຂະໜາດນ້ອຍເພື່ອໃຫ້ມີປະສິດຕິພາບໃນພາກໃຕ້ຂອງລາວ ຄຽງຄູ່ກັບການຊອກຫາທຶນຊ່ວຍເຫຼືອ ຈາກຜູ້ໃຫ້ທຶນອື່ນຕໍ່ໄປ.

Norwegian People's Aid

# ຜົນໄດ້ຮັບໂດຍລວມທັງໝົດ

ນັບຕັ້ງແຕ່ເລີ່ມໂຄງການ ຈາກວັນທີ 09 ກັນຍາ 2009 ຈົນເຖິງ ວັນທີ 31 ສິງຫາ 2026, ເອັນພີເອລາວໄດ້:

**69 km²**
ກວດກູ້ພື້ນທີ່ ທີ່ມີລະເບີດຕົກຄ້າງ ຈາກ 1,100 ສະໜາມກວດກູ້

**176ມ268**
ຈຳນວນລະເບີດທີ່ຖືກທຳລາຍ ຈາກການສຳຫຼວດ ແລະ ກວດກູ້ຂອງພື້ນທີ່ອັນຕະລາຍ




**658 km²**
ເນື້ອທີ່ຖືກສຳຫຼວດ, ກຳນົດພື້ນທີ່ ທີ່ລະເບີດຕົກຄ້າງຫຼາຍກວ່າ 4,712 ສະໜາມ ເຊິ່ງຄວບຄຸມເປັນພື້ນທີ່ຫຼາຍກວ່າ 323 km²

**3,059**
ຈຳນວນຄັ້ງຂອງກິດຈະກຳໂຄສະນາ ໃນ 191 ບ້ານ ເຊິ່ງເຂົ້າເຖິງຜູ້ໄດ້ຮັບຜົນປະໂຫຍດ 386,712 ຄົນ

**666,355**
ຈຳນວນຄົນທີ່ເຂົ້າເຖິງ ພື້ນທີ່ທີ່ປອດໄພທັງທາງກົງ ແລະ ທາງອ້ອມ

# ຜົນໄດ້ຮັບ 2025

**4.8 km²**
ເນື້ອທີ່ສຳຫຼວດ ແລະ ລະບຸພື້ນທີ່ CHAs 16 ພື້ນທີ່ ເຊິ່ງກວມພື້ນທີ່ກວ່າ 1.4 km²

**5,651**
ຈຳນວນລູກລະເບີດທີ່ກວດພົບ ແລະ ໄດ້ທຳລາຍຢ່າງປອດໄພ

**746**
ຈຳນວນກິດຈະກຳໂຄສະນາຄວາມສ່ຽງໄພຈາກ ລບຕ ຢູ່ໃນ 40 ບ້ານ

**6.5 km²**
ກວດກູ້ພື້ນທີ່ ທີ່ເຄີຍມີການປົນເປື້ອນຈາກ ລບຕ ແລະ ລະເບີດລູກຫວ່ານຫຼາຍກວ່າ 110 ສະໜາມ

**5,304**
ຈຳນວນຄົນທີ່ໄດ້ຮັບຜົນປະໂຫຍດໂດຍກົງຈາກການເຂົ້າເຖິງເນື້ອທີ່ດິນທີ່ປອດໄພ

**141,023**
ຈຳນວນຄົນທີ່ໄດ້ເຂົ້າຮ່ວມກິດຈະກຳໂຄສະນາຄວາມສ່ຽງໄພຈາກ ລບຕ

## ທຶນຊ່ວຍເຫຼືອ ແລະ ຜູ້ໃຫ້ທຶນ

ທຶນຊ່ວຍເຫຼືອປະຈຳປີ 2026
**USD $11,600,000**

NPA ຂໍສະແດງຄວາມຂອບໃຈຕໍ່ກັບຜູ້ໃຫ້ທຶນ - ລັດຖະບານສະຫະລັດອາເມລິກາ, ລັດຖະບານນອກແວ ແລະ ລັດຖະບານການາດາ ລວມເຖິງການປະກອບສ່ວນຢ່າງເອື້ອເຟື້ອຈາກປະຊາຊົນແຫ່ງລາຊະອານາຈັກນອກແວ ທີ່ສະໜັບສະໜູນວຽກງານຂອງພວກເຮົາ ໃນການປົກປ້ອງປະຊາຊົນຈາກວັດຖຸລະເບີດຢູ່ໃນ ສປປ ລາວ ແລະ ເພື່ອຊ່ວຍໃຫ້ປະເທດປະຕິບັດຕາມພັນທະ ພາຍໃຕ້ມາດຕາ 4 ຂອງສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ.

## ຂໍ້ມູນເພີ່ມເຕີມ

ເວັບໄຊອົງການເອັນພີເອລາວ
https://shorturl.at/QhOtX

ເຟສບຸກເພສອົງການເອັນພີເອລາວ
https://shorturl.at/ZZ4WD

Lao PDR Profile in the Mine Action Review
https://shorturl.at/F3H34


## ຕິດຕໍ່

ທ່ານ ຢັນ ອີຣິກ ສະເຕີອໍ, ຫົວໜ້າອົງການເອັນພີເອ: janeriko@npaid.org

+856 21 264 812 | npa.laos@npaid.org | www.npaid.org